HIỆP ĐỊNH
VỀ HỢP TÁC KHOA HỌC VÀ CÔNG NGHỆ
GIỮA
CHÍNH PHỦ NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM
VÀ
CHÍNH PHỦ NƯỚC CỘNG HOÀ DÂN CHỦ NHÂN DÂN LÀO

Chính phủ nước Cộng hoà Xã hội chủ nghĩa Việt Nam và Chính phủ nước Cộng hoà Dân chủ nhân dân Lào (sau đây gọi chung là " các Bên", gọi riêng là "Bên"),

Mong muốn tăng cường quan hệ hữu nghị giữa hai nước và thúc đẩy phát triển hợp tác trong lĩnh vực khoa học và công nghệ,

Nhận rõ tầm quan trọng của khoa học và công nghệ đối với nền kinh tế quốc dân của hai nước,

Đã thoả thuận như sau:

Điều 1

Phù hợp theo pháp luật và quy định của mình, các Bên sẽ thúc đẩy hợp tác trong lĩnh vực khoa học và công nghệ giữa hai nước trên cơ sở bình đẳng và cùng có lợi.

Điều 2

Hợp tác trong khuôn khổ Hiệp định này có thể bao gồm các hình thức sau đây:

(a) Trao đổi thông tin, kiến thức và kinh nghiệm về khoa học và công nghệ;

(b) Trao đổi các nhà khoa học và chuyên gia kỹ thuật để khảo sát, tham quan nghiên cứu và đào tạo trong các lĩnh vực khoa học và công nghệ;

(c) Cùng thực hiện hoặc phối hợp thực hiện các chương trình, dự án và các hoạt động nghiên cứu triển khai trên lãnh thổ của một hoặc hai Bên;

(d) Các hình thức hợp tác khác về khoa học và công nghệ được các Bên thoả thuận.

Điều 3

Với mục tiêu tạo thuận lợi cho hợp tác khoa học và công nghệ, trong trường hợp cần thiết, các Bên sẽ thúc đẩy việc ký kết các thoả thuận bổ sung để thực hiện các hoạt động hợp tác giữa các cơ quan Nhà nước, các viện nghiên cứu, các trường đại học và các cơ quan khác có liên quan của hai bên trong khuôn khổ Hiệp định này. Các thoả thuận đó sẽ được ký kết phù hợp với pháp luật và quy định hiện hành của hai nước.

Điều 4

Các điều khoản và điều kiện bao gồm cả các chi phí thực hiện đối với từng chương trình, dự án hoặc hoạt động được tiến hành theo Hiệp định sẽ được các Bên thoả thuận cụ thể với nhau.

Điều 5

Trong khuôn khổ pháp luật và quy định hiện hành của mình, mỗi bên sẽ dành cho bên kia mọi sự giúp đỡ cần thiết để tạo thuận lợi cho các hoạt động hợp tác trong khuôn khổ Hiệp định.

Điều 6

1. Để bảo đảm các điều kiện tối ưu cho việc thực hiện Hiệp định này, các Bên sẽ thành lập Uỷ ban hợp tác khoa học và công nghệ Việt Nam-Lào gồm các đại diện do các Bên chỉ định.

2. Nhiệm vụ của Uỷ ban hợp tác khoa học và công nghệ nêu trên là:

(a) Kiểm điểm tiến độ của các hoạt động hợp tác trong khuôn khổ Hiệp định;

(b) Xác định các lĩnh vực hợp tác mới trong khuôn khổ Hiệp định;

(c) Thảo luận các vấn đề khác liên quan đến Hiệp định.

3. Uỷ ban hợp tác khoa học và công nghệ sẽ họp luân phiên hai năm một lần tại nước Cộng hoà Xã hội chủ nghĩa Việt Nam và nước Cộng hoà Dân chủ nhân dân Lào.

4. Chính phủ nước Cộng hoà Xã hội chủ nghĩa Việt Nam và Chính phủ nước Cộng hoà Dân chủ nhân dân Lào cử các cơ quan thẩm quyền của mình dưới đây chủ trì thi hành Hiệp định này. Phía Việt Nam là Bộ Khoa học và Công nghệ, phía Lào là Uỷ ban Khoa học và Công nghệ quốc gia.

Điều 7

1. Các bên sẽ chú ý thích đáng đến việc bảo hộ các quyền sở hữu trí tuệ hoặc các quyền khác có tính chất sở hữu do hoạt động hợp tác tạo ra trong khuôn khổ Hiệp định và nếu cần thiết sẽ tham khảo ý kiến của nhau nhằm thực hiện việc bảo hộ.

2. Việc giải quyết các vấn đề liên quan đến các quyền sở hữu trí tuệ do các hoạt động hợp tác tạo ra trong khuôn khổ Hiệp định sẽ được ghi vào các thoả thuận bổ sung nêu tại Điều 3 của Hiệp định.

3. Thông tin khoa học và công nghệ do các hoạt động hợp tác trong khuôn khổ Hiệp định này tạo ra mà không mang tính chất sở hữu, nếu không có thoả thuận nào khác, có thể được cung cấp cho một bên thứ ba thông qua các kênh giao lưu thông thường và phù hợp với các thủ tục hiện hành của các cơ quan tham gia các hoạt động này.

Điều 8

Hiệp định này sẽ không ảnh hưởng tới giá trị pháp lý hoặc việc thi hành bất cứ quyền hoặc nghĩa vụ nào trong các điều ước quốc tế mà mỗi Bên là thành viên.

Điều 9

Mọi bất đồng liên quan đến việc giải thích hoặc áp dụng Hiệp định này sẽ được giải quyết thông qua thương lượng giữa các Bên hoặc qua các biện pháp khác theo sự thoả thuận của các Bên.

Điều 10

1. Hiệp định này có hiệu lực sau ba mươi ngày kể từ ngày ký.

2. Hiệp định này có hiệu lực trong thời gian 5 năm và mặc nhiên được gia hạn cho từng 5 năm tiếp theo, trừ phi một Bên thông báo bằng văn bản cho Bên kia ý định chấm dứt Hiệp định ít nhất sáu tháng trước khi Hiệp định hết hiệu lực.

3. Một Bên có thể bằng thông báo bằng văn bản đề nghị sửa đổi hoặc bổ sung Hiệp định này. Những sửa đổi hoặc bổ sung như vậy sẽ có hiệu lực từ ngày nhận được văn bản thông báo chấp thuận từ phía Bên kia và là một phần không thể tách rời của Hiệp định này.

4. Việc Hiệp định chấm dứt theo khoản 2 của Điều này không ảnh hưởng đến các chương trình, dự án hoặc hoạt động tiến hành trong khuôn khổ Hiệp định này và được bắt đầu trước thời điểm Hiệp định chấm dứt hiệu lực.

Để làm bằng, những người ký tên dưới đây, được hai Chính phủ uỷ quyền đầy đủ, đã ký Hiệp định này.

Làm tại Viêng-chăn, ngày 18 tháng 12 năm 2008 thành hai bản gốc bằng tiếng Việt và tiếng Lào.

THAY MẶT CHÍNH PHỦ NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM	THAY MẶT CHÍNH PHỦ NƯỚC CỘNG HOÀ DÂN CHỦ NHÂN DÂN LÀO
Hoàng Văn Phong Bộ trưởng Bộ Khoa học và Công nghệ	Bountiem Phissamay, Bộ trưởng, Chủ nhiệm Uỷ Ban Khoa học và Công nghệ

ສັນຍາ
ການຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີ
ລະຫວ່າງ
ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ
ແລະ
ລັດຖະບານ ແຫ່ງ ສາທາລະນະລັດສັງຄົມນິຍົມຫວຽດນາມ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດສັງຄົມນິຍົມ ຫວຽດນາມ (ຕໍ່ນີ້ໄປຈະໄດ້ເອີ້ນວ່າແຕ່ລະຝ່າຍ). ມີຄວາມມຸ່ງຫວັງໃນການເພີ່ມທະວີການພົວພັນມິດຕະພາບລະຫວ່າງຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ຂອງສອງປະເທດ ແລະ ຊຸກດັນໃຫ້ເພີ່ມທະວີການຮ່ວມມືໃນຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີ ລະຫວ່າງຂະແໜງການວິທະຍາສາດ ແລະ ເຕັກໂນໂລຊີ ຂອງສອງປະເທດ

ໂດຍເຫັນໄດ້ຄວາມສຳຄັນ ຂອງວິທະຍາສາດ ແລະ ເຕັກໂນໂລຊີ ຕໍ່ກັບພື້ນຖານເສດຖະ ກິດ ແຫ່ງຊາດ ຂອງສອງປະເທດ. ທັງສອງຝ່າຍຈຶ່ງໄດ້ພ້ອມກັນປຶກສາຫາລື ແລະ ເປັນເອກະພາບກັນ ດັ່ງນີ້:

ມາດຕາ 1

ແຕ່ລະຝ່າຍກໍ່ຈະຊຸກດັນການຮ່ວມມືໃນຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີ ລະຫວ່າງສອງ ປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ຂໍ້ກຳນົດຂອງຕົນ, ບົນພື້ນຖານສະເໝີພາບ ແລະ ຕ່າງຝ່າຍ ຕ່າງມີຜົນປະໂຫຍດ.

ມາດຕາ 2

ຮ່ວມມືຕາມກອບຂອງສັນຍາສະບັບນີ້ ລວມມີບັນດາຮູບແບບດັ່ງຕໍ່ໄປນີ້:

ກ. ແລກປ່ຽນຂ່າວສານ, ຄວາມຮູ້ ແລະ ປະສົບປະການ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ;

ຂ. ແລກປ່ຽນບັນດານັກວິທະຍາສາດ ແລະ ຊ່ຽວຊານດ້ານເຕັກນິກ ເພື່ອສຳຫລວດ, ຢ້ຽມຢາມ ຄົ້ນຄວ້າ ແລະ ບຳລຸງກໍ່ສ້າງ ໃນຂົງເຂດວິທະຍາສາດ ແລະ ເຕັກໂນໂລຊີ.

ຄ. ພ້ອມກັນຈັດຕັ້ງປະຕິບັດ ຫລື ຮ່ວມກັນຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ແລະ ບັນດາ ການເຄື່ອນໄຫວຄົ້ນຄວ້າ ວິໄຈໃນປະເທດຂອງຝ່າຍໜຶ່ງ ຫລື ຂອງທັງສອງຝ່າຍ;

ງ. ບັນດາຮູບແບບການຮ່ວມມືອື່ນໆ ກ່ຽວກັບວິທະຍາສາດ ແລະ ເຕັກໂນໂລຊີ ໂດຍໄດ້ຮັບການ ເຫັນພ້ອມຈາກສອງຝ່າຍ.

ມາດຕາ 3

ດ້ວຍຈຸດປະສົງໃນການເອື້ອອຳນວຍຄວາມສະດວກໃຫ້ແກ່ການຮ່ວມມື ດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ໃນກໍລະນີທີ່ຈຳເປັນ, ແຕ່ລະຝ່າຍຈະຕ້ອງໄດ້ມີການຊຸກດັນໃຫ້ມີການເຊັນ ສັນຍາຂໍ້ຕົກລົງເພີ່ມເຕີມ ເພື່ອຈັດຕັ້ງປະຕິບັດການເຄື່ອນໄຫວການຮ່ວມມື ລະຫວ່າງອົງການຈັດຕັ້ງ ລັດ, ບັນດາ ສະຖາບັນຄົ້ນຄວ້າ, ບັນດາມະຫາວິທະຍາໄລ ແລະ ບັນດາອົງການຈັດຕັ້ງອື່ນໆນັບທັງແຂວງທີ່ມີສ່ວນ ພົວພັນຂອງທັງສອງຝ່າຍໃນຂອບເຂດຂອງສັນຍາສະບັບນີ້. ບັນດາຂໍ້ຕົກລົງດັ່ງກ່າວ ຈະໄດ້ຮັບການລົງ ນາມໂດຍສອດຄ່ອງກັບກົດໝາຍ ແລະ ຂໍ້ກຳນົດຕ່າງໆທີ່ພວມຖືການຳໃຊ້ໃນປະຈຸບັນ ຂອງສອງປະເທດ.

ມາດຕາ 4

ບັນດາມາດຕາ ແລະ ເງື່ອນໄຂຕ່າງໆ ລວມມີທັງການໃຊ້ຈ່າຍເພື່ອຈັດຕັ້ງປະຕິບັດຂອງແຕ່ລະ ແຜນງານ, ໂຄງການ ຫລື ການເຄື່ອນໄຫວຕ່າງໆທີ່ໄດ້ດຳເນີນໄປຕາມສັນຍາ ແມ່ນຈະໄດ້ຮັບການປຶກສາ ຫາລືລາຍລະອຽດນຳກັນ.

ມາດຕາ 5

ໃນຂອບເຂດຂອງກົດໝາຍ ແລະ ຂໍ້ກຳນົດທີ່ພວມໄດ້ນຳໃຊ້ໃນປະຈຸບັນຂອງຕົນ, ແຕ່ລະຝ່າຍ ຈະສ້າງເງື່ອນໄຂອຳນວຍຄວາມສະດວກອັນທີ່ຈຳເປັນໃຫ້ແກ່ກັນ ແລະ ກັນ ເພື່ອສ້າງເງື່ອນໄຂ ໃຫ້ແກ່ ການເຄື່ອນໄຫວຮ່ວມມືໃນຂອບເຂດ ຂອງສັນຍາ.

ມາດຕາ 6

1. ເພື່ອຮັບປະກັນເງື່ອນໄຂທີ່ດີໃຫ້ແກ່ການຈັດຕັ້ງປະຕິບັດສັນຍານີ້, ແຕ່ລະຝ່າຍຈະຕ້ອງໄດ້ສ້າງຕັ້ງ ຄະນະຮ່ວມມື ດ້ານວິທະຍາສາດ ແລະ ເຕັກໂນໂລຊີ ລາວ-ຫວຽດນາມ ເຊິ່ງມີຜູ້ຕາງໜ້າ ໂດຍ ການກຳນົດ ຂອງແຕ່ລະຝ່າຍ.

2. ໜ້າທີ່ ຂອງຄະນະຮ່ວມມື ດ້ານວິທະຍາສາດ ແລະ ເຕັກໂນໂລຊີ ດັ່ງກ່າວ ມີດັ່ງນີ້:

ກ. ຕິດຕາມ ກວດກາ ຄວາມຄືບໜ້າຂອງການເຄື່ອນໄຫວ ການຮ່ວມມື ໃນຂອບເຂດຂອງ ສັນຍາ

ຂ. ຊຸກຍູ້ການຈັດຕັ້ງປະຕິບັດການເຄື່ອນໄຫວຮ່ວມມືນຳກັນໃນຂົງເຂດທີ່ໄດ້ຕົກລົງເຫັນດີນຳ ກັນແລ້ວ ແລະ ກຳນົດໜ້າວຽກໃນຂົງເຂດການຮ່ວມມືໃໝ່ ໃນຂອບເຂດຂອງສັນຍາ;

ຄ. ປຶກສາຫາລືບັນດາບັນຫາໃໝ່ ທີ່ພົວພັນກັບສັນຍາ

3. ຄະນະຮ່ວມມື ວິທະຍາສາດ ແລະ ເຕັກໂນໂລຊີ ຈະຕ້ອງໄດ້ປະຊຸມກັນ ສອງປີ/ຄັ້ງ ໂດຍຈັດ ສະຫລັບສະຖານທີ່ກັນ ຢູ່ ສປປ ລາວ ແລະ ສສ ຫວຽດນາມ.
4. ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ ຫວຽດນາມ ໂດຍໄດ້ມອບໜ້າທີ່ ໃຫ້ແກ່ອົງການຈັດຕັ້ງທີ່ມີສິດອຳນາດຂອງຕົນ ໃນການຈັດຕັ້ງປະຕິບັດສັນຍາສະບັບນີ້. ຝ່າຍ ລາວ ແມ່ນ ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ, ຝ່າຍຫວຽດນາມ ແມ່ນ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

ມາດຕາ 7

1. ແຕ່ລະຝ່າຍ ຈະຕ້ອງໄດ້ເອົາໃຈໃສ່ຢ່າງຊອບທຳເຖິງການປົກປ້ອງຊັບສິນທາງປັນຍາ ຫລື ສິດທິ ອັນອື່ນໆທີ່ເປັນຜົນງານທີ່ມີລັກສະນະກຳມະສິດ ເຊິ່ງເກີດຂຶ້ນພາຍໃຕ້ຂອບເຂດຂອງການຮ່ວມ ມືທີ່ລະບຸໄວ້ຂອງສັນຍາ ຫລືຖ້າມີຄວາມຈຳເປັນ ຈະມີການປຶກສາຫາລື ແລະ ຂໍຄຳເຫັນເຊິ່ງກັນ ແລະ ກັນ ເພື່ອຈຸດປະສົງໃນການປົກປ້ອງ.

2. ການແກ້ໄຂບັນຫາທີ່ພົວພັນເຖິງຊັບສິນທາງປັນຍາ ເຊິ່ງເກີດຂຶ້ນຈາກການເຄື່ອນໄຫວການຮ່ວມ ມືໃນຂອບເຂດຂອງສັນຍາ ແມ່ນຈະໄດ້ບັນຈຸເພີ່ມເຕີມເຂົ້າໃນມາດຕາ 3 ຂອງສັນຍາສະບັບນີ້.

3. ຂໍ້ມູນຂ່າວສານ ວິທະຍາສາດ ແລະ ເຕັກໂນໂລຊີ ໂດຍເກີດຈາກການຮ່ວມມືໃນຂອບເຂດ ຂອງ ສັນຍານີ້ທີ່ບໍ່ມີລັກສະນະເປັນກຳມະສິດ, ຖ້າຫາກບໍ່ມີຂໍ້ຜູກພັນດ້ານອື່ນໆແມ່ນອາດຈະມີການ ສະໜອງໃຫ້ແກ່ພາກສ່ວນທີ່ສາມ ໂດຍຜ່ານການແລກປ່ຽນຂໍ້ມູນແບບປົກກະຕິ ແລະ ສອດ ຄ່ອງກັບລະບຽບການທີ່ພວມຖືກນຳໃຊ້ໃນປະຈຸບັນ ຂອງບັນດາພາກສ່ວນຕ່າງໆທີ່ປະກອບ ສ່ວນໃນການເຄື່ອນໄຫວດັ່ງກ່າວ.

ມາດຕາ 8

ສັນຍາສະບັບນີ້ ຈະບໍ່ສົ່ງຜົນສະທ້ອນເຖິງຄຸນຄ່າດ້ານນິຕິກຳ ຫລື ການປະຕິບັດດ້ານສິດທິ ຫລື ພັນທະຕ່າງໆຂອງສົນທິສັນຍາສາກົນ ຫລື ກົດບັດສາກົນທີ່ທັງສອງຝ່າຍເປັນສະມາຊິກ.

ມາດຕາ 9

ທຸກຂໍ້ຜິດພາດທີ່ພົວພັນເຖິງການອະທິບາຍ ຫລື ການໝູນໃຊ້ສັນຍາສະບັບນີ້ ຈະໄດ້ຮັບການແກ້ໄຂໂດຍຜ່ານການເຈລະຈາ ລະຫວ່າງສອງຝ່າຍ ຫລືໂດຍຜ່ານມາດຕະການອື່ນທີ່ທັງສອງຝ່າຍຈະປຶກສາກັນ ແລະ ມີວິທີແກ້ໄຂຢ່າງເໝາະສົມ.

ມາດຕາ 10

1. ສັນຍາສະບັບນີ້ມີຜົນສັກສິດ ພາຍຫລັງ 30 ວັນ ນັບແຕ່ມື້ທີ່ໄດ້ລົງລາຍເຊັນເປັນຕົ້ນໄປ.

2. ສັນຍາສະບັບນີ້ມີຜົນບັງຄັບໃຊ້ໃນໄລຍະເວລາ 5 ປີ ແລະ ຈະໄດ້ສືບຕໍ່ໃຫ້ສັດຕະຍາບັນ ໃນ 5 ປີຕໍ່ໄປ. ເວັ້ນເສັຍແຕ່ໃນກໍລະນີມີຝ່າຍໃດຝ່າຍໜຶ່ງເຮັດໜັງສືເປັນທາງການເຖິງ ອີກຝ່າຍໜຶ່ງເພື່ອຢຸດຕິສັນຍາ ແລະ ຢ່າງຊ້າສຸດບໍ່ໃຫ້ກາຍ 6 ເດືອນ ກ່ອນຜົນບັງຄັບໃຊ້ຂອງສັນຍາຈະໝົດກຳນົດ.

3. ຝ່າຍໃດຝ່າຍໜຶ່ງ ອາດຈະເຮັດໜັງສືແຈ້ງການຢ່າງເປັນທາງການ ໄປຍັງອີກຝ່າຍໜຶ່ງ ເພື່ອ ປັບປຸງ ປ່ຽນແປງ ຫລື ເພີ່ມເຕີມສັນຍາສະບັບນີ້. ການປັບປຸງ ປ່ຽນແປງ ຫລື ເພີ່ມເຕີມດັ່ງກ່າວ ຈະໄດ້ຮັບການປະຕິບັດໄດ້ກໍ່ຕໍ່ເມື່ອມີການເຫັນດີເຫັນພ້ອມຂອງທັງສອງຝ່າຍ ແລະ ມີໜັງສືແຈ້ງການຢ່າງເປັນທາງການ – ນັ້ນແມ່ນສ່ວນໜຶ່ງທີ່ບໍ່ສາມາດຕັດແຍກອອກຈາກສັນຍາສະບັບນີ້ ແລະ ຈະມີຜົນບັງຄັບໃຊ້ໄດ້ກໍ່ຕໍ່ເມື່ອໄດ້ຮັບໜັງສືແຈ້ງຕອບຮັບເປັນທາງການ ຂອງອີກຝ່າຍໜຶ່ງ.

4. ການຍຸດຕິສັນຍາ ໃນຂໍ້ 2 ຂອງມາດຕານີ້ ແມ່ນຈະບໍ່ສົ່ງຜົນສະທ້ອນເຖິງບັນດາແຜນງານ, ໂຄງການ ແລະ ການດຳເນີນການ ທີ່ໄດ້ລົງມືປະຕິບັດຜ່ານມາກ່ອນຜົນບັງຄັບໃຊ້ຂອງສັນຍາຈະສິ້ນສຸດລົງ.

ເພື່ອເປັນບ່ອນອີງໃຫ້ແກ່ການປຶກສາຫາລື ແລະ ຂໍ້ຕົກລົງທີ່ກ່າວມາຂ້າງເທິງ, ບັນດາບຸກຄົນທີ່ລົງນາມຢູ່ລຸ່ມນີ້ ແມ່ນໄດ້ຮັບການມອບສິດເຕັມອຳນາດໃນການລົງນາມສັນຍາສະບັບນີ້.

ສັນຍາສ້າງຂຶ້ນທີ່ນະຄອນຫລວງວຽງຈັນ, ວັນທີ 18 ເດືອນ ທັນວາ ປີ 2008, ເປັນ 2 ສະບັບຕົ້ນ, ເປັນ 2 ພາສາ ລາວ ແລະ ຫວຽດນາມ. ແຕ່ລະສະບັບມີຄຸນຄ່າທາງດ້ານກົດໝາຍເທົ່າທຽມກັນ.

ຕາງໜ້າລັດຖະບານ ແຫ່ງ	ຕາງໜ້າລັດຖະບານ ແຫ່ງ
ສາທາລະນະລັດ ສັງຄົມນິຍົມຫວຽດນາມ	ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ

BỘ NGOẠI GIAO

Số : 23/2009/SL-LPQT

SAO Y BẢN CHÍNH

Hiệp định về hợp tác khoa học và công nghệ giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào, ký tại Viêng-chăn ngày 18 tháng 12 năm 2008, có hiệu lực từ ngày 17 tháng 01 năm 2009.

Hà Nội, ngày 09 tháng 3 năm 2009

TL. BỘ TRƯỞNG

KT.VỤ TRƯỞNG

VỤ LUẬT PHÁP VÀ ĐIỀU ƯỚC QUỐC TẾ

PHÓ VỤ TRƯỞNG

Nguyễn Thị Hoàng Anh

Nơi nhận :

- Văn phòng Quốc hội *(để báo cáo)*;
- Văn phòng Chủ tịch nước *(để báo cáo);*
- Văn phòng Chính phủ *(để báo cáo);*
- Phòng Công báo, Văn phòng Chính phủ *(để đăng Công báo;*
- Bộ Khoa học và Công nghệ;
- Đại sứ quán Việt Nam tại Lào;
- Vụ Đông Nam Á-Nam Á-Nam Thái Bình Dương, Bộ Ngoại giao;
- Vụ Luật pháp và Điều ước quốc tế, Bộ Ngoại giao.